**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນສູງສຸດ

ເລກທີ 62 /ສປສສ

ນະຄອນຫຼວງວຽງຈັນ, ວັນທີ 07 ກຸມພາ 2019

# ຄຳແນະນຳ

## ຂອງປະທານສານປະຊາຊົນສູງສຸດ

## ວ່າດ້ວຍການພິຈາລະນາຂອງສານປະຊາຊົນ ຕໍ່ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

- **ອີງຕາມ** ກົດໝາຍວ່າດ້ວຍ ສານປະຊາຊົນ ສະບັບເລກທີ 22/ສພຊ, ລົງວັນທີ 10 ພຶດສະພາ 2017;
- **ອີງຕາມ** ກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ສະບັບເລກທີ 13/ສພຊ, ລົງວັນທີ 4 ກໍລະກົດ 2012 ;
- **ອີງຕາມ** ກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບເລກທີ 51/ສພຊ, ລົງວັນທີ 22 ມິຖຸນາ 2018 ;
- **ອີງຕາມ** ມະຕິຕົກລົງ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 37/ຄປຈ, ລົງວັນທີ 6 ພຶດສະພາ 2011 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສານປະຊາຊົນສູງສຸດ.

**ປະທານສານປະຊາຊົນສູງສຸດ ອອກຄຳແນະນຳ ດັ່ງນີ້:**

## I. ບົດບັນຍັດທົ່ວໄປ

### 1. ຈຸດປະສົງ

ຄຳແນະນຳສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ຂັ້ນຕອນ ໃນການພິຈາລະນາຂອງສານປະຊາຊົນຕໍ່ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງອົງການທີ່ກ່ຽວຂ້ອງຢູ່ພາຍໃນປະເທດ ແລະ ຕ່າງປະເທດ ຫຼື ສາກົນ. ແນໃສ່ຮັບປະກັນການປະຕິບັດໜ້າທີ່ຂອງສານປະຊາຊົນໃຫ້ມີຄວາມສະດວກ, ວ່ອງໄວ, ເປັນເອກະພາບ, ມີປະສິດທິພາບ, ຖືກຕ້ອງ, ສອດຄ່ອງຕາມກົດໝາຍ ແລະ ລະບຽບການ ເພື່ອປົກປ້ອງສິດ, ຜົນປະໂຫຍດອັນຊອບທຳຂອງຄູ່ກໍລະນີ, ປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ, ຊຸກຍູ້ເສດຖະກິດໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ.

### 2. ການພິຈາລະນາຂອງສານປະຊາຊົນ ຕໍ່ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ການພິຈາລະນາຂອງສານປະຊາຊົນ ຕໍ່ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນການອອກຄຳຕົກລົງ ຂອງສານປະຊາຊົນ ກ່ຽວກັບການພິຈາລະນາຂອງສານປະຊາຊົນຕໍ່ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງອົງການທີ່ກ່ຽວຂ້ອງຢູ່ພາຍໃນປະເທດ ແລະ ຕ່າງປະເທດ ຫຼື ສາກົນ.

### 3. ການອະທິບາຍຄຳສັບ

**ຄຳສັບທີ່ນຳໃຊ້ໃນຄຳແນະນຳສະບັບນີ້ ມີຄວາມໝາຍ ດັ່ງນີ້:**

**3.1 ສານປະຊາຊົນ ທີ່ມີສິດອຳນາດໃນການພິຈາລະນາຜົນຂອງການແກ້ໄຂຂໍ້ຂັດແຍ່ງ**

**ທາງດ້ານເສດຖະກິດ ຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດພາຍໃນປະເທດ ແລະ ຕ່າງປະເທດ ຫຼື ສາກົນ** ໝາຍເຖິງ ສານປະຊາຊົນແຫ່ງ ສປປ ລາວ ;

3.2 **ຄຳຕົກລົງຂອງສານປະຊາຊົນ** ໝາຍເຖິງ ເອກະສານຂອງສານປະຊາຊົນ ຊຶ່ງປະກອບດ້ວຍ: ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານປະຊາຊົນ ;

3.3 **ການຢັ້ງຢືນ ຫຼື ບໍ່ຢັ້ງຢືນຂອງສານປະຊາຊົນ** ໝາຍເຖິງ ການພິຈາລະນາອອກຄຳຊີ້ຂາດ ໂດຍສານປະຊາຊົນ ຕໍ່ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດພາຍໃນປະເທດ;

3.4 **ການຢັ້ງຢືນ** ໝາຍເຖິງ ການເຫັນດີຕາມຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພາຍໃນປະເທດ ທີ່ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ;

3.5 **ການບໍ່ຢັ້ງຢືນ** ໝາຍເຖິງ ການບໍ່ເຫັນດີຕາມຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພາຍໃນປະເທດ ທີ່ບໍ່ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ;

3.6 **ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດພາຍໃນປະເທດ** ໝາຍເຖິງ ການຕົກລົງຂອງຄູ່ກໍລະນີໃນການໄກ່ເກ່ຍ, ການຕົກລົງຂອງຄູ່ກໍລະນີກ່ອນການຕັດສິນ ແລະ ຄຳຕັດສິນຂອງກຳມະການຕັດສິນ ;

3.7 **ກຳມະການຕັດສິນ** ໝາຍເຖິງ ຜູ້ທີ່ຖືກເລືອກ ຫຼື ກຳມະການທີ່ຖືກເລືອກ ໂດຍຄູ່ກໍລະນີ ຫຼື ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ;

3.8 **ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ** ໝາຍເຖິງ ສູນ ແລະ ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ;

3.9 **ການຮັບຮູ້ ຫຼື ບໍ່ຮັບຮູ້ຂອງສານປະຊາຊົນ** ໝາຍເຖິງການພິຈາລະນາຕັດສິນ ຫຼື ພິພາກສາ ໂດຍສານປະຊາຊົນ ຕໍ່ຜົນຂອງຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ;

3.10 **ການຮັບຮູ້** ໝາຍເຖິງ ການເຫັນດີຕາມຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ທີ່ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ;

3.11 **ການບໍ່ຮັບຮູ້** ໝາຍເຖິງ ການບໍ່ເຫັນດີຕາມຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ທີ່ບໍ່ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ;

3.12 **ຜົນຂອງຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ** ໝາຍເຖິງ ຄຳຕັດສິນຂອງກຳມະການຕັດສິນ ຕ່າງປະເທດ ຫຼື ສາກົນ ;

3.13 **ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຕ່າງປະເທດ ຫຼື ສາກົນ** ໝາຍເຖິງ ການຈັດຕັ້ງ ຫຼື ນິຕິບຸກຄົນ ທີ່ສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍ ທີ່ມີໜ້າທີ່ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານທຸລະກິດ, ການຄ້າ ຂອງຕ່າງປະເທດ ຫຼື ສາກົນ ;

3.14 **ຄຳຮ້ອງຂໍ ຕໍ່ສານປະຊາຊົນ** ໝາຍເຖິງ ການຮ້ອງຂໍ ຂອງຄູ່ກໍລະນີ ເພື່ອໃຫ້ສານປະຊາຊົນແຫ່ງ ສປປ ລາວ ພິຈາລະນາບັງຄັບປະຕິບັດຜົນ ຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ;

3.15 **ຄຳສະເໜີ ຕໍ່ສານປະຊາຊົນ** ໝາຍເຖິງ ການສະເໜີ ຂອງຄູ່ກໍລະນີ ເພື່ອໃຫ້ສານປະຊາຊົນ ແຫ່ງ ສປປ ລາວ ພິຈາລະນາຄັດຄ້ານຄຳຕັດສິນຂອງກຳມະການຕັດສິນ ;

3.16 **ຄູ່ກໍລະນີ** ໝາຍເຖິງ ຄູ່ຂັດແຍ່ງທາງດ້ານເສດຖະກິດ ຊຶ່ງປະກອບດ້ວຍ ຝ່າຍຮ້ອງຂໍ, ຝ່າຍຖືກຮ້ອງຂໍ ແລະ ບຸກຄົນທີສາມ .

**4. ຂອບເຂດການນຳໃຊ້**

ຄຳແນະນຳສະບັບນີ້ ນຳໃຊ້ສະເພາະການພິຈາລະນາອອກຄຳຕົກລົງຂອງສານປະຊາຊົນ ແຫ່ງ ສສປ ລາວ ເພື່ອຢັ້ງຢືນ ຫຼື ບໍ່ຢັ້ງຢືນ, ຮັບຮູ້ ຫຼື ບໍ່ຮັບຮູ້ ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງອົງການທີ່ກ່ຽວຂ້ອງຢູ່ພາຍໃນປະເທດ ແລະ ຕ່າງປະເທດ ຫຼື ສາກົນ.

**5. ຫຼັກການພື້ນຖານ ການພິຈາລະນາ ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ສານປະຊາຊົນຕ້ອງປະຕິບັດຕາມຫຼັກການພື້ນຖານຂອງກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ບັນດາລະບຽບການອື່ນທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

## II. ຂັ້ນຕອນການພິຈາລະນາອອກຄຳຊີ້ຂາດຂອງສານປະຊາຊົນ ຕໍ່ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດພາຍໃນປະເທດ

**1. ຜູ້ທີ່ມີສິດສະເໜີຄັດຄ້ານ ຫຼື ຮ້ອງຂໍຕໍ່ສານປະຊາຊົນ**

ຄູ່ກໍລະນີເປັນຜູ້ມີສິດໃນການສະເໜີຄັດຄ້ານ ຫຼື ຮ້ອງຂໍເພື່ອບັງຄັບປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດພາຍໃນປະເທດ ຊຶ່ງແບ່ງອອກເປັນ 2 ກໍລະນີດັ່ງນີ້:

1.1 ຄູ່ກໍລະນີ ມີສິດສະເໜີຕໍ່ສານປະຊາຊົນ ເພື່ອຄັດຄ້ານຄຳຕັດສິນຂອງກຳມະການຕັດສິນ ພາຍໃນກຳນົດ ສາມສິບວັນ ນັບແຕ່ວັນຮັບຊາບຄຳຕັດສິນເປັນຕົ້ນໄປ .

1.2 ຄູ່ກໍລະນີ ຝ່າຍທີ່ໄດ້ຮັບຄວາມເສັຍປະໂຫຍດ ຈາກການບໍ່ປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີສິດຮ້ອງຂໍຕໍ່ສານປະຊາຊົນ ພິຈາລະນາອອກຄຳຊີ້ຂາດ ເພື່ອບັງຄັບປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ.

**2. ເນື້ອໃນຄຳສະເໜີຄັດຄ້ານ ຫຼື ຄຳຮ້ອງຂໍຕໍ່ສານປະຊາຊົນ ແລະ ການປະກອບເອກະສານ**

**ຄຳສະເໜີຄັດຄ້ານ ຫຼື ຄຳຮ້ອງຂໍຕໍ່ສານປະຊາຊົນ ແລະ ການປະກອບເອກະສານ ໃຫ້ປະຕິບັດດັ່ງນີ້:**

**2.1 ເນື້ອໃນຄຳສະເໜີຄັດຄ້ານ ຫຼື ຄຳຮ້ອງຂໍ ປະກອບດ້ວຍ:**

2.1.1 ຊື່, ນາມສະກຸນ, ອາຍຸ, ສັນຊາດ, ອາຊີບ, ທີ່ຢູ່ປັດຈຸບັນໜ່ວຍ, ບ້ານ, ເມືອງ/ນະຄອນ, ແຂວງ/ນະຄອນຫຼວງ, ເບີໂທລະສັບ ຂອງຜູ້ຮ້ອງຂໍ, ຜູ້ຖືກຮ້ອງຂໍ ແລະ/ຫຼື ບຸກຄົນທີສາມ ;

2.1.2 ເຫດການຂອງຄະດີໂດຍຫຍໍ້ ;

2.1.3 ການແກ້ໄຂຂໍ້ຂັດແຍ່ງຜ່ານມາ ;

2.1.4 ບັນຫາທີ່ສະເໜີ ຫຼື ຮ້ອງຂໍໃຫ້ສານພິຈາລະນາ ;

2.1.5 ລາຍຊື່ເອກະສານທີ່ຄັດຕິດ ;

2.1.6 ລາຍເຊັນ ແລະ ການແປະໂປ້ມື ຂອງຜູ້ຮ້ອງຂໍ.

**2.2 ເອກະສານທີ່ຄັດຕິດ ປະກອບດ້ວຍ:**

2.2.1 ຄຳສະເໜີຄັດຄ້ານ ຫຼື ຄຳຮ້ອງຂໍ ຕາມທີ່ກຳນົດໃນຂໍ້ 2.1 ຂອງພາກທີ II ນີ້ ;

2.2.2 ບົດບັນທຶກການຕົກລົງຂອງຄູ່ກໍລະນີໃນການໄກ່ເກ່ຍ, ການຕົກລົງຂອງຄູ່ກໍລະນີກ່ອນການຕັດສິນ ແລະ ຄຳຕັດສິນຂອງກຳມະການຕັດສິນສະບັບຕົ້ນ ຫຼື ສະບັບສຳເນົາ ທີ່ໄດ້ຮັບການຢັ້ງຢືນຄວາມຖືກຕ້ອງຈາກສຳນັກງານທະບຽນສານ ;

2.2.3 ເອກະສານອື່ນທີ່ກ່ຽວຂ້ອງ.

ຄຳສະເໜີ ຫຼື ຄຳຮ້ອງຂໍ ໃຫ້ຍື່ນຕໍ່ສານປະຊາຊົນແຂວງ ຫຼື ນະຄອນຫຼວງວຽງຈັນ ບ່ອນທີ່ພິຈາລະນາຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**3. ການກວດກາຄຳສະເໜີຄັດຄ້ານ ຫຼື ຄຳຮ້ອງຂໍ**

ເມື່ອສານປະຊາຊົນໄດ້ຮັບຄຳສະເໜີຄັດຄ້ານ ຫຼື ຄຳຮ້ອງຂໍແລ້ວ ຈ່າສານຕ້ອງໄດ້ກວດກາຄຳສະເໜີຄັດຄ້ານ ຫຼື ຄຳຮ້ອງຂໍ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 2 ຂອງພາກທີ II ໃນຄຳແນະນຳສະບັບນີ້. ໃນກໍລະນີທີ່ຄຳສະເໜີຄັດຄ້ານ ຫຼື ຄຳຮ້ອງຂໍ ຫາກປະຕິບັດບໍ່ຖືກຕ້ອງ ຈ່າສານຈະສົ່ງຄຳສະເໜີຄັດຄ້ານ ຫຼື ຄຳຮ້ອງຂໍ ໃຫ້ຜູ້ສະເໜີຄັດຄ້ານ ຫຼື

ຜູ້ຮ້ອງຂໍ ພ້ອມທັງແນະນຳໃຫ້ຜູ້ກ່ຽວແກ້ໄຂຄຳສະເໜີຄັດຄ້ານ ຫຼື ຄຳຮ້ອງຂໍ ຫຼື ປະກອບເອກະສານຕື່ມ ໃຫ້ຖືກຕ້ອງ ແລ້ວຈ່າສານຈຶ່ງປະກອບເປັນສຳນວນຄະດີຂຶ້ນຟ້ອງພິເສດ ແຍກຈາກ ຄະດີການຄ້າທົ່ວໄປ ພ້ອມທັງໃຫ້ຜູ້ສະເໜີຄັດຄ້ານ ຫຼື ຜູ້ຮ້ອງຂໍນຳເງິນມາວາງສານຕາມກົດໝາຍ.

ສຳລັບການປະກອບສຳນວນຄະດີນັ້ນ ໃຫ້ໃສ່ເສື້ອປົກສຳນວນຄະດີການຄ້າ ແຕ່ໃນເວລາຂຶ້ນຟ້ອງ ແມ່ນໃຫ້ນຳໃຊ້ເລກທີພິເສດ ແຍກຈາກຄະດີການຄ້າທົ່ວໄປ ໂດຍໃຊ້ອັກສອນຫຍໍ້ວ່າ: ຊຂ.ກ ແຕ່ໃນເວລາທີ່ມີ ການເກັບກຳສະຖິຕິ ແມ່ນໃຫ້ຄິດໄລ່ເຂົ້າເປັນສະຖິຕິຄະດີການຄ້າທັງໝົດ.

#### 4. ການພິຈາລະນາອອກຄຳຊີ້ຂາດຂອງສານປະຊາຊົນ

ເມື່ອສານປະຊາຊົນໄດ້ຮັບສຳນວນຄະດີ ສານປະຊາຊົນຕ້ອງພິຈາລະນາ ທາງດ້ານກົດໝາຍເທົ່ານັ້ນ ເຊິ່ງຈະບໍ່ພິຈາລະນາທາງດ້ານເນື້ອໃນຂໍ້ຂັດແຍ່ງ. ໃນກໍລະນີທີ່ຈຳເປັນສານປະຊາຊົນສາມາດຮຽກຄູ່ກໍລະນີ ແລະ/ຫຼື ປະສານສົມທົບກັບສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອຊີ້ແຈງກ່ຽວກັບຂັ້ນຕອນການແກ້ໄຂຕາມກົດໝາຍ ແລະ ລະບຽບການ.

ການພິຈາລະນາອອກຄຳຊີ້ຂາດຂອງສານປະຊາຊົນ ແມ່ນໃຫ້ພິຈາລະນາເປັນຄະນະສານ.

#### 5. ຂອບເຂດການພິຈາລະນາອອກຄຳຊີ້ຂາດ

ໃນກໍລະນີ ທີ່ຄູ່ກໍລະນີ ສະເໜີຄັດຄ້ານຄຳຕັດສິນ ຫຼື ຮ້ອງຂໍບັງຄັບປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງກຳມະການຕັດສິນນັ້ນ ສານປະຊາຊົນຕ້ອງໄດ້ກວດກາເບິ່ງຄຳສະເໜີຄັດຄ້ານ ຫຼື ຄຳຮ້ອງຂໍດັ່ງກ່າວ ຫາກພົບເຫັນກໍລະນີໃດໜຶ່ງດັ່ງລຸ່ມນີ້ ສານປະຊາຊົນຕ້ອງອອກຄຳຊີ້ຂາດ ບໍ່ຢັ້ງຢືນ ເອົາຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດັ່ງກ່າວ ຊຶ່ງປະກອບດ້ວຍ:

5.1 ຄູ່ກໍລະນີບໍ່ມີຄວາມສາມາດທາງດ້ານການປະພຶດ ;

5.2 ຜົນຂອງການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ຂັດກັບກົດໝາຍຂອງ ສປປ ລາວ ;

5.3 ຜົນຂອງການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ຍັງບໍ່ທັນມີຜົນບັງຄັບຄູ່ກໍລະນີ ຫຼື ຖືກຍົກເລີກ ຫຼື ຖືກໂຈະໂດຍສານ ;

5.4 ຂໍ້ຂັດແຍ່ງດັ່ງກ່າວບໍ່ສາມາດແກ້ໄຂໄດ້ດ້ວຍກົດໝາຍຂອງ ສປປ ລາວ ;

5.5 ຄູ່ກໍລະນີ ບໍ່ໄດ້ຕົກລົງໃຫ້ແກ້ໄຂຂໍ້ຂັດແຍ່ງດ້ວຍຮູບ ການໄກ່ເກ່ຍ, ການຕັດສິນ ຫຼື ການຕົກລົງນັ້ນເປັນໂມຄະ ;

5.6 ການປະກອບຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ, ກຳມະການຕັດສິນ ບໍ່ສອດຄ່ອງກັບການຕົກລົງຂອງຄູ່ກໍລະນີ ແລະ ກົດໝາຍ ;

5.7 ການດຳເນີນການໄກ່ເກ່ຍ ຫຼື ການຕັດສິນ ບໍ່ສອດຄ່ອງກັບລະບຽບການ, ກົດໝາຍກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ບໍ່ນຳໃຊ້ລະບຽບການ, ກົດໝາຍໃນການແກ້ໄຂ ຕາມທີ່ຄູ່ກໍລະນີໄດ້ຕົກລົງກັນໃນສັນຍາ ;

5.8 ຂໍ້ມູນ, ຫຼັກຖານ ທີ່ຖືເປັນພື້ນຖານໃນການຕັດສິນນັ້ນ ມີການປອມແປງ ຫຼື ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ ຫຼື ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ຮັບເງິນ, ຊັບສິນ ຫຼື ຜົນປະໂຫຍດອື່ນ ຫຼື ມີການລຳອຽງ ຊຶ່ງສົ່ງຜົນກະທົບຕໍ່ການຕັດສິນ ;

5.9 ຂໍ້ຂັດແຍ່ງບໍ່ຢູ່ໃນຂອບເຂດສິດທີ່ຕ້ອງນຳມາພິຈາລະນາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງກົດໝາຍ ວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ;

5.10 ຄຳຕັດສິນເກີນ ຫຼື ບໍ່ຄົບຖ້ວນ ຕາມຄຳຮ້ອງຂໍຂອງຄູ່ກໍລະນີ ຊຶ່ງບໍ່ໄດ້ຮັບການແກ້ໄຂ .

ຖ້າສານປະຊາຊົນ ຫາກເຫັນວ່າ ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດັ່ງກ່າວ ຫາກຖືກຕ້ອງຕາມທີ່ກົດໝາຍໄດ້ກຳນົດໄວ້ ສານປະຊາຊົນຕ້ອງອອກຄຳຊີ້ຂາດຢັ້ງຢືນ ເອົາຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອບັງຄັບປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ.

**6. ມາດຕະການຂອງສານປະຊາຊົນ**

ຄູ່ກໍລະນີ ມີສິດຮ້ອງຂໍຕໍ່ສານປະຊາຊົນ ເພື່ອນໍາໃຊ້ມາດຕະການໃດໜຶ່ງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ນັບແຕ່ໃນຊ່ວງທີ່ມີການແກ້ໄຂຂໍ້ຂັດແຍ່ງຢູ່ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫຼື ໃນຊ່ວງທີ່ມີການດໍາເນີນຄະດີຢູ່ສານ ທັງນີ້ກໍເພື່ອເປັນການປົກປ້ອງສິດຜົນປະໂຫຍດຂອງຄູ່ກໍລະນີ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍ ການດໍາເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**7. ກໍານົດເວລາໃນການພິຈາລະນາ**

ເມື່ອສານປະຊາຊົນໄດ້ຮັບຄໍາສະເໜີຄັດຄ້ານ ຫຼື ຄໍາຮ້ອງຂໍ ຂອງຄູ່ກໍລະນີແລ້ວ ສານປະຊາຊົນຕ້ອງພິຈາລະນາອອກຄໍາຊີ້ຂາດ ຕໍ່ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພາຍໃນກໍານົດ ສິບຫ້າວັນ ນັບແຕ່ວັນທີ່ໄດ້ຮັບຄໍາສະເໜີຄັດຄ້ານ ຫຼື ຄໍາຮ້ອງຂໍ ເປັນຕົ້ນໄປ.

**8. ປະເພດຄໍາຊີ້ຂາດ**

ສານປະຊາຊົນອອກຄໍາຊີ້ຂາດ ຕໍ່ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດັ່ງນີ້:

8.1 **ຢັ້ງຢືນ** ເອົາຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

8.2 **ບໍ່ຢັ້ງຢືນ** ເອົາຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

**9. ເນື້ອໃນຄໍາຊີ້ຂາດ**

ເນື້ອໃນຄໍາຊີ້ຂາດ ໃຫ້ປະຕິບັດຕາມຮ່າງຄໍາຊີ້ຂາດຂອງສານປະຊາຊົນສູງສຸດ.

ຄໍາຊີ້ຂາດ ຕ້ອງເຮັດເປັນສອງສະບັບຄື ສະບັບໜຶ່ງສໍາເນົາເກັບມ້ຽນໄວ້, ສ່ວນອີກສະບັບໜຶ່ງ ໄວ້ໃນສໍານວນຄະດີ. ຄໍາຊີ້ຂາດທີ່ຄູ່ກໍລະນີ ຫຼື ພາກສ່ວນອື່ນ ຕ້ອງການນັ້ນ ໃຫ້ອັດສໍາເນົາ ໂດຍແມ່ນ ຈ່າສານ ເປັນຜູ້ຢັ້ງຢືນ.

**10. ຜົນບັງຄັບປະຕິບັດ ຄໍາຊີ້ຂາດ**

**ຄໍາຊີ້ຂາດຂອງສານປະຊາຊົນ** ຕໍ່ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ສານປະຊາຊົນຢັ້ງຢືນເອົາຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນມີຜົນບັງຄັບປະຕິບັດໃນທັນໃດ ແລະ ບໍ່ສາມາດຂໍອຸທອນໄດ້ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 42 ວັກຫ້າ ຂອງກົດໝາຍວ່າດ້ວຍ ການດໍາເນີນຄະດີແພ່ງ ແລະ ມາດຕາ 52 ຂອງກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ. ແຕ່ພາຍຫຼັງຫາກເຫັນວ່າ ການອອກຄໍາຊີ້ຂາດດັ່ງກ່າວຫາກບໍ່ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍແລ້ວ ແມ່ນໃຫ້ປະຕິບັດຕາມມາດຕາ 313 ຂອງກົດໝາຍວ່າດ້ວຍ ການດໍາເນີນຄະດີແພ່ງ.

**ຄໍາຊີ້ຂາດຂອງສານປະຊາຊົນ** ທີ່ບໍ່ຢັ້ງຢືນ ເອົາຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຄູ່ກໍລະນີ ມີສິດຕົກລົງໃຫ້ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແກ້ໄຂຄືນໃໝ່ ຫຼື ຮ້ອງຟ້ອງຕໍ່ສານປະຊາຊົນ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 42 ວັກຫ້າ ຂອງກົດໝາຍວ່າດ້ວຍ ການດໍາເນີນຄະດີແພ່ງ ແລະ ມາດຕາ 52 ຂອງກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ຄໍາຊີ້ຂາດ ຕໍ່ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຮັບຊາບພາຍໃນກໍານົດເຈັດວັນ.

## III. ຂັ້ນຕອນການພິຈາລະນາອອກຄໍາຕັດສິນຂອງສານປະຊາຊົນ ຕໍ່ຜົນຂອງຄໍາຕັດສິນຂອງກໍາມະການຕັດສິນ ຕ່າງປະເທດ ຫຼື ສາກົນ

**1. ຜູ້ທີ່ມີສິດຮ້ອງຂໍຕໍ່ສານປະຊາຊົນ**

ຄູ່ກໍລະນີ ເປັນຜູ້ມີສິດໃນການຮ້ອງຂໍຕໍ່ສານປະຊາຊົນ ແຫ່ງ ສປປ ລາວ ເພື່ອຮັບຮູ້ ແລະ ບັງຄັບປະຕິບັດຜົນຂອງຄໍາຕັດສິນຂອງກໍາມະການຕັດສິນຕ່າງ ປະເທດ ຫຼື ສາກົນ ຕາມກົດໝາຍ.

## 2. ເນື້ອໃນຄຳຮ້ອງຂໍ ແລະ ການປະກອບເອກະສານ

**ເນື້ອໃນຄຳຮ້ອງຂໍ ແລະ ການປະກອບເອກະສານໃຫ້ປະຕິບັດ ດັ່ງນີ້:**

### 2.1 ເນື້ອໃນຄຳຮ້ອງຂໍ ປະກອບດ້ວຍ:

2.1.1 ຊື່, ນາມສະກຸນ ແລະ ທີ່ຢູ່ຂອງຜູ້ຮ້ອງຂໍ ;

2.1.2 ຊື່, ນາມສະກຸນ ແລະ ທີ່ຢູ່ ໃນ ສປປ ລາວ ຂອງບຸກຄົນທີ່ຖືກຮ້ອງຂໍ ແລະ/ຫຼື ບຸກຄົນທີສາມ ຕາມຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ;

2.1.3 ເຫດການທີ່ເປັນສາເຫດພາໃຫ້ມີການຮ້ອງຂໍ ແລະ ຫຼັກຖານຢັ້ງຢືນເພື່ອໃຫ້ສານຕັດສິນ ;

2.1.4 ຄຳຮ້ອງຂໍ ທີ່ບົ່ງບອກຈຳນວນໜີ້ສິນ, ຊັບສິນທີ່ຍັງຄ້າງປະຕິບັດ ;

2.1.5 ລາຍຊື່ເອກະສານທີ່ຄັດຕິດ ;

2.1.6 ລາຍເຊັນ ແລະ ຊື່ແຈ້ງ ຂອງຜູ້ຮ້ອງຂໍ.

### 2.2 ເອກະສານທີ່ຄັດຕິດ ປະກອບດ້ວຍ:

2.2.1 ຄຳຮ້ອງຂໍ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 2.1 ຂອງພາກທີ III ນີ້ ;

2.2.2 ຄຳຕັດສິນຂອງກຳມະການຕັດສິນ ຕ່າງປະເທດ ຫຼື ສາກົນ ທີ່ເປັນສະບັບຕົ້ນ ຫຼື ສະບັບສຳເນົາ ໂດຍມີການຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງ ;

2.2.3 ສັນຍາ ຫຼື ເອກະສານອື່ນທີ່ກ່ຽວຂ້ອງກັບຂໍ້ຂັດແຍ່ງ ທີ່ເຫັນວ່າມີຄວາມຈຳເປັນ.

ໃນກໍລະນີທີ່ເອກະສານດັ່ງກ່າວຫາກເປັນພາສາຕ່າງປະເທດ ຕ້ອງໄດ້ແປເປັນພາສາລາວ ໂດຍມີການຢັ້ງຢືນຄວາມຖືກຕ້ອງ ຈາກອົງການທະບຽນສານ ຊຶ່ງເປັນພັນທະຂອງຜູ້ຮ້ອງຂໍ.

## 3. ຂັ້ນຕອນການຍື່ນຄຳຮ້ອງຂໍ

ຄຳຮ້ອງຂໍ ເພື່ອໃຫ້ພິຈາລະນາຮັບຮູ້ ແລະ ປະຕິບັດຜົນຂອງຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ຢູ່ ສປປ ລາວ ແມ່ນໃຫ້ຍື່ນຜ່ານກະຊວງການຕ່າງປະເທດ ຫຼື ຜ່ານສະຖານທູດ, ສະຖານກົງສຸນ ຫຼື ອົງການຕາງໜ້າຂອງ ສປປ ລາວ ປະຈຳຢູ່ຕ່າງປະເທດ ຫຼື ສະຖານທູດ, ສະຖານກົງສຸນ ຫຼື ອົງການຕາງໜ້າຂອງຕ່າງປະເທດປະຈຳຢູ່ ສປປ ລາວ ແລ້ວສົ່ງຫາກະຊວງການຕ່າງປະເທດກວດກາ ຫຼັງຈາກນັ້ນຈຶ່ງນຳສະເໜີຕໍ່ກະຊວງຍຸຕິທຳ ພິຈາລະນາກວດກາ ແລ້ວນຳສະເໜີຕໍ່ສານປະຊາຊົນສູງສຸດ ເພື່ອສົ່ງໃຫ້ສານປະຊາຊົນທີ່ມີສິດອຳນາດພິຈາລະນາຕາມກົດໝາຍ.

## 4. ການກວດກາ ຄຳຮ້ອງຂໍ

ໃນການກວດກາຄຳຮ້ອງຂໍ ເພື່ອໃຫ້ພິຈາລະນາຮັບຮູ້ ແລະ ປະຕິບັດຜົນຂອງຄຳຕັດສິນ ຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ຢູ່ ສປປ ລາວ ຂອງກະຊວງການຕ່າງປະເທດ ແລະ ກະຊວງຍຸຕິທຳນັ້ນ ແມ່ນໃຫ້ຈັດຕັ້ງປະຕິບັດຕາມສິດ ແລະ ພາລະບົດບາດຂອງຕົນ ທີ່ໄດ້ກຳນົດໄວ້ ກົດໝາຍ ແລະ ລະບຽບການ.

ສຳລັບ ສານປະຊາຊົນສູງສຸດ ໃຫ້ຄົ້ນຄວ້າ ດັ່ງນີ້:

4.1 ກວດກາຂັ້ນຕອນຂອງການຍື່ນເອກະສານ ແລະ ສິດອຳນາດຂອງສານທີ່ກ່ຽວຂ້ອງ ;

4.2 ສົ່ງສຳນວນຄຳຮ້ອງຂໍ ໃຫ້ສານທີ່ກ່ຽວຂ້ອງ ;

4.3 ໃນກໍລະນີທີ່ມີຂໍ້ຂັດແຍ່ງກ່ຽວກັບສິດອຳນາດສານ ປະທານສານປະຊາຊົນສູງສຸດ ຈະອອກຄຳຊີ້ຂາດກ່ຽວກັບສິດອຳນາດຂອງສານ ທີ່ມີສິດພິຈາລະນາອອກຄຳຕັດສິນ ຕາມກົດໝາຍ.

## 5. ການພິຈາລະນາອອກຄຳຕັດສິນຂອງສານປະຊາຊົນ

ການພິຈາລະນາອອກຄຳຕັດສິນຂອງສານປະຊາຊົນແຫ່ງ ສປປ ລາວ ໃນການຮັບຮູ້ ຫຼື ບໍ່ຮັບຮູ້ຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ເພື່ອບັງຄັບປະຕິບັດຢູ່ ສປປ ລາວ ແມ່ນໃຫ້ປະຕິບັດຕາມຂໍ້ 3 ແລະ 4 ຂອງພາກທີ II ໃນຄຳແນະນຳສະບັບນີ້.

ສຳລັບການປະກອບສຳນວນຄະດີນັ້ນ ໃຫ້ໃສ່ເສື້ອປົກສຳນວນຄະດີການຄ້າ ແຕ່ໃນເວລາຂຶ້ນຟ້ອງ ແມ່ນໃຫ້ນຳໃຊ້ເລກທີພິເສດ ແຍກຈາກຄະດີການຄ້າທົ່ວໄປ ໂດຍໃຊ້ອັກສອນຫຍໍ້ວ່າ: ຂຕ.ກ.ຕປທ (ສຳລັບສານຂັ້ນຕົ້ນ) ແລະ ອທ.ກ.ຕປທ (ສຳລັບຂັ້ນອຸທອນ) ແຕ່ໃນເວລາທີ່ມີການເກັບກຳສະຖິຕິ ແມ່ນໃຫ້ຄິດໄລ່ເຂົ້າເປັນສະຖິຕິຄະດີການຄ້າທັງໝົດ.

ສານປະຊາຊົນຕ້ອງເຊີນຫົວໜ້າອົງການໄອຍະການປະຊາຊົນຂັ້ນຂອງຕົນເຂົ້າຮ່ວມໃນການພິຈາລະນາ.

## 6. ຂອບເຂດການພິຈາລະນາອອກຄຳຕັດສິນ

ສານປະຊາຊົນ ແຫ່ງ ສປປ ລາວ ຈະພິຈາລະນາຕັດສິນຮັບຮູ້ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງຕ່າງປະເທດ ຫຼື ສາກົນ ຖ້າເຫັນວ່າຜົນຂອງການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ, ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ, ບໍ່ແຕະຕ້ອງເຖິງຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ສິ່ງແວດລ້ອມ.

ສານປະຊາຊົນ ແຫ່ງ ສປປ ລາວ ຈະພິຈາລະນາຕັດສິນບໍ່ຮັບຮູ້ຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ເມື່ອພົບເຫັນກໍລະນີໃດໜຶ່ງ ດັ່ງນີ້:

6.1 ຄູ່ກໍລະນີໃດໜຶ່ງ ບໍ່ມີຄວາມສາມາດທາງດ້ານການປະພຶດ ;

6.2 ຜົນຂອງການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວຂັດກັບກົດໝາຍທີ່ໃຊ້ເປັນບ່ອນອີງໃນການແກ້ໄຂ ຫຼື ບໍ່ສອດຄ່ອງກັບກົດໝາຍຂອງ ສປປ ລາວ ;

6.3 ຄຳຕັດສິນດັ່ງກ່າວ ຍັງບໍ່ທັນມີຜົນບັງຄັບຄູ່ກໍລະນີ ຫຼື ຖືກຍົກເລີກ, ຖືກໂຈະ ຫຼື ມີຄຳຕົກລົງ ທີ່ໃຊ້ໄດ້ຢ່າງເດັດຂາດ ໂດຍສານແຫ່ງ ສປປ ລາວ ຫຼື ສານຕ່າງປະເທດບ່ອນແກ້ໄຂ ;

6.4 ຄຳຕັດສິນດັ່ງກ່າວບໍ່ຖືກຕັດສິນໂດຍປະເທດທີ່ເປັນພາຄີຂອງສົນທິສັນຍານີວຢອກ 1958 ;

6.5 ການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ບໍ່ນອນຢູ່ໃນສິດອຳນາດຂອງສານປະຊາຊົນແຫ່ງ ສປປ ລາວ ຫຼື ບໍ່ສາມາດແກ້ໄຂໄດ້ດ້ວຍກົດໝາຍຂອງ ສປປ ລາວ ;

6.6 ຄູ່ກໍລະນີ ໃນຄຳຕັດສິນດັ່ງກ່າວ ບໍ່ໄດ້ເຂົ້າຮ່ວມໃນການແກ້ໄຂ ;

6.7 ຂໍ້ຂັດແຍ່ງດັ່ງກ່າວ ນອນຢູ່ໃນສິດອຳນາດຂອງສານປະຊາຊົນແຫ່ງ ສປປ ລາວ ຊຶ່ງກຳມະການຕັດສິນຂອງຕ່າງປະເທດ ຫຼື ສາກົນ ບໍ່ມີສິດອຳນາດໃນການແກ້ໄຂ .

## 7. ກຳນົດເວລາໃນການພິຈາລະນາອອກຄຳຕັດສິນ

ເມື່ອສານປະຊາຊົນໄດ້ຮັບຄຳຮ້ອງຂໍຂອງຄູ່ກໍລະນີແລ້ວ ສານປະຊາຊົນຕ້ອງພິຈາລະນາອອກຄຳຕັດສິນຕໍ່ຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ພາຍໃນກຳນົດ ສາມສິບວັນ .

## 8. ເນື້ອໃນຄຳຕັດສິນຂອງສານປະຊາຊົນ

ເນື້ອໃນຄຳຕັດສິນ ໃຫ້ປະຕິບັດຕາມຮ່າງຄຳຕັດສິນຂອງສານປະຊາຊົນສູງສຸດ ;

ສານ ອອກຄຳຕັດສິນໃນນາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ;

ຄຳຕັດສິນຂອງສານປະຊາຊົນ ປະກອບດ້ວຍ ພາກສະເໜີ, ພາກເນື້ອຄະດີ, ພາກວິນິດໄສ ແລະ ພາກຕັດສິນ ;

ຄຳຕັດສິນ ຕ້ອງເຮັດເປັນສອງສະບັບ ຄື ສະບັບໜຶ່ງໄວ້ສຳເນົາ, ສ່ວນອີກສະບັບໜຶ່ງ ໄວ້ໃນສຳນວນຄະດີ. ຄຳຕັດສິນທີ່ຄູ່ກໍລະນີ ຫຼື ພາກສ່ວນອື່ນຕ້ອງການນັ້ນ ໃຫ້ອັດສຳເນົາ ໂດຍແມ່ນ ຈ່າສານ ເປັນຜູ້ຢັ້ງຢືນ.

## 9. ປະເພດຄຳຕັດສິນ

ສານປະຊາຊົນອອກຄຳຕັດສິນ ຕໍ່ຜົນຂອງຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ດັ່ງນີ້ :

9.1 **ຮັບຮູ້ຄຳຕັດສິນ** ຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ;

9.2 **ບໍ່ຮັບຮູ້ຄຳຕັດສິນ** ຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ.

### 10. ການຂໍອຸທອນ ຫຼື ສະເໜີຄັດຄ້ານຄຳຕັດສິນ

ຄູ່ກໍລະນີ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ມີສິດຂໍອຸທອນ ຫຼື ສະເໜີຄັດຄ້ານ ຄຳຕັດສິນ ທີ່ຮັບຮູ້ ຫຼື ບໍ່ຮັບຮູ້ຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ພາຍໃນກຳນົດເວລາ ຊາວວັນ ນັບແຕ່ວັນຮັບຊາບຄຳຕັດສິນ ເປັນຕົ້ນໄປ.

ເມື່ອມີການຂໍອຸທອນ ຫຼື ສະເໜີຄັດຄ້ານຄຳຕັດສິນດັ່ງກ່າວ ສານປະຊາຊົນທີ່ກ່ຽວຂ້ອງ ຕ້ອງສົ່ງສຳນວນຄະດີ ຂຶ້ນຫາສານປະຊາຊົນຂັ້ນອຸທອນ ເພື່ອພິຈາລະນາເຫດຜົນຂອງການຂໍອຸທອນ ຫຼື ສະເໜີຄັດຄ້ານນັ້ນ ສຳລັບຂັ້ນຕອນແມ່ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ.

ຄຳພິພາກສາຂອງສານປະຊາຊົນຂັ້ນອຸທອນ ກ່ຽວກັບບັນຫາດັ່ງກ່າວ ໃຫ້ຖືເປັນຄຳພິພາກສາທີ່ໃຊ້ໄດ້ຢ່າງເດັດຂາດ ຊຶ່ງບໍ່ມີສິດຂໍລົບລ້າງໄດ້.

### 11. ການແຈ້ງຄຳຕັດສິນຂອງສານປະຊາຊົນ

ສານປະຊາຊົນຕ້ອງສົ່ງຄຳຕັດສິນໃຫ້ແກ່ຄູ່ກໍລະນີ ແລະ ຫົວໜ້າອົງການໄອຍະການປະຊາຊົນເພື່ອຮັບຊາບ. ໃນກໍລະນີ ທີ່ຄູ່ກໍລະນີຫາກຢູ່ຕ່າງປະເທດ ສານປະຊາຊົນກໍຈະສົ່ງຄຳຕັດສິນດັ່ງກ່າວ ຜ່ານກະຊວງຍຸຕິທຳ ເພື່ອດຳເນີນການຕາມກົດໝາຍ .

ຄຳຕັດສິນຂອງສານປະຊາຊົນ ທີ່ບໍ່ຂໍອຸທອນ ຫຼື ສະເໜີຄັດຄ້ານ ຖືວ່າເປັນຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ.

ຄຳຕັດສິນ ຫຼື ຄຳພິພາກສາ ທີ່ໃຊ້ໄດ້ຢ່າງເດັດຂາດ ສານປະຊາຊົນຕ້ອງສົ່ງສຳນວນຄະດີໄປຍັງຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານບ່ອນກ່ຽວຂ້ອງພາຍໃນເວລາ ສາມວັນລັດຖະການ.

## IV. ບົດບັນຍັດສຸດທ້າຍ

### 1. ການຈັດຕັ້ງປະຕິບັດ

ສານປະຊາຊົນສູງສຸດ, ສານປະຊາຊົນພາກ, ສານປະຊາຊົນແຂວງ ຫຼື ນະຄອນຫຼວງວຽງຈັນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນຜູ້ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ຢ່າງເຂັ້ມງວດ ແລະ ມີປະສິດທິຜົນ.

### 2. ຜົນສັກສິດ

ຄຳແນະນຳສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

**ປະທານສານປະຊາຊົນສູງສຸດ**

ຄຳພັນ ສິດທິດຳພາ